ຂ່າວ NEWS
ຫ້ອງການຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR



# ທຫລ ລະດົມຄວາມຄິດພັດທະນາຮູບແບບການບໍລິການດ້ານການເງິນ ແບບດິຈິຕອລໃນລາວ ໃຫ້ແຜ່ຫຼາຍ






ຜ່ານມາການບໍລິການດັ່ງກ່າວໄດ້ເກີດຂຶ້ນ ແລະ ສາມາດໃຫ້ບໍລິການປະຊາຊົນໃນເຂດຊົນນະບົດ ແລະ ຕົວເມືອງໄດ້ສ່ວນໜຶ່ງ ໂດຍແມ່ນການບໍລິການເງິນດ່ວນຊຸມຊົນ ຫຼື ( BCOME ) ເປັນຜະລິດຕະພັນຂອງທະນາຄານການຄ້າຕ່າງປະເທດລາວມະຫາຊົນ ໂດຍພາຍໃຕ້ການຜັກດັນຂອງ ທຫລ ແລະ ກອງທຶນພັດທະນາແຫ່ງສະຫະປະຊາຊາດ (UNCDF) ເພື່ອໃຫ້ເປັນຕົວຢ່າງ ແລະ ກໍລະນີສຶກສາ.

ທະນາຄານແຫ່ງ ສປປ ລາວ ( ທຫລ ) ແລະ ກອງທຶນພັດທະນາແຫ່ງສະຫະປະຊາຊາດ ( UNCDF ) ໄດ້ຈັດກອງປະຊຸມເພື່ອປຶກສາຫາລືກ່ຽວກັບວຽກງານການບໍລິການດ້ານການເງິນແບບດິຈິຕອລ ຂຶ້ນທີ່ໂຮງແຮມເມີຄຽວ, ນະຄອນຫຼວງວຽງຈັນ ໃນຕອນເຊົ້າຂອງວັນທີ 16 ມີນາ 2017 ເຊິ່ງໃຫ້ກຽດເປັນປະທານ ແລະ ກ່າວເປີດຂອງທ່ານ ອາຄົມ ປຣະເສີດ ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ, ທະນາຄານແຫ່ງ ສປປ ລາວ ເຊິ່ງມີຜູ້ເຂົ້າຮ່ວມຈາກກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ພາກສ່ວນໃຫ້ບໍລິການເຄື່ອຂ່າຍໂທລະສັບ, ທະນາຄານທຸລະກິດ ແລະ ອົງການຈັດຕັ້ງສາກົນ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.





ກອງປະຊຸມດັ່ງກ່າວໄດ້ປຶກສາຫາລືກັນກ່ຽວກັບການບໍລິຫານຕົວແທນໃຫ້ບໍລິການ ແລະ ການແບ່ງສ່ວນຮັບຜິດຊອບ, ປະເພດຕົວແທນ ແລະ ການກະຈາຍການບໍລິການຂອງ (DFS) ແລະ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດການໃຫ້ບໍລິການ (DFS) ໃນ ສປປ ລາວ ເຊິ່ງປະຈຸບັນການບໍລິການໃນຮູບການ (DFS) ນີ້ ປະຊາຊົນໃນເຂດຊົນນະບົດກໍ່ສາມາດເຂົ້າເຖິງການບໍລິການ ແລະ ສາມາດນຳໃຊ້ໄດ້ຢ່າງແທ້ຈິງເຊັ່ນ: ການໂອນເງິນຈາກທອງຖິ່ນມາສູ່ຕົວເມືອງໂດຍບໍ່ຜ່ານສາຂາທະນາຄານ ໂດຍແມ່ນໃຫ້ການບໍລິການເງິນດ່ວນຊຸມຊົນ ຫຼື (BCOME).

ກອງປະຊຸມວຽກງານການບໍລິການດ້ານການເງິນແບບດິຈິຕອລ ແມ່ນການຮ່ວມມືກັນລະຫວ່າງ ທຫລ ແລະ UNCDF ເຊິ່ງເທື່ອນີ້ແມ່ນເປັນຄັ້ງທີ 8 ແລະ ທັງສອງພາກສ່ວນກໍ່ມີຄວາມພະຍາຍາມໃນການເລັ່ງພັດທະນາລະບົບການຊຳລະສະສ້າງໃນ ສປປ ລາວ ໃຫ້ຫັນໄປສູ່ຄວາມທັນສະໄໝໃຫ້ຫຼາຍຂຶ້ນ ເນື່ອງຈາກວ່າໃນປະຈຸບັນປະຊາຊົນໃນທົ່ວປະເທດ ເຂົ້າເຖິງການບໍລິການຂອງສະຖາບັນການເງິນພຽງ 35% ຂອງພົນລະເມືອງ ເຊິ່ງແນ່ນອນວ່າ ຖ້າລະບົບການໃຫ້ບໍລິການດັ່ງກ່າວສາມາດຂະຫຍາຍຖານການໃຫ້ບໍລິການໄດ້ ປະຊາຊົນໃນເຂດຊົນນະບົດກໍ່ຈະສາມາດເຂົ້າເຖິງການບໍລິການນີ້ໄດ້ຢ່າງຖ້ວເຖິງ.

ການບໍລິການທາງການເງິນແບບດິຈິຕອລ ຫຼື Digital Financial Services (DFS) ເປັນໂຄງການທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ໃຫ້ຄວາມສຳຄັນ ແນໃສ່ເຮັດໃຫ້ປະຊາຊົນໃນທົ່ວປະເທດໄດ້ນຳໃຊ້ບໍລິການໃນການໂອນ, ການຖອນ, ການຊຳລະ ແລະ ການແລກປ່ຽນເງິນ ໂດຍການເຮັດທຸລະກຳຕ່າງໆທີ່ກ່າວມານີ້ຜ່ານແຕ່ໂທລະສັບມືຖືຢ່າງດຽວ.

*✵ ຂ່າວ-ພາບ: ສົມອິກ ເດນຄຳແພງ*

*ເງິນກີບຄືກຽດສັກສີຂອງຄົນລາວ*